

# ທະນາຄານແຫ່ງ ສປປ ລາວ ມອບເງິນຊຸກຍູ້ ວຽກງານຕ້ານການລະບາດຂອງພະຍາດ COVID-19






ໃນຕອນເຊົ້າຂອງວັນທີ 29 ເມສາ 2021 ທີ່ ກະຊວງສາທາລະນະສຸກ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມອບເງິນໃຫ້ແກ່ລັດຖະບານເພື່ອປະກອບສ່ວນເຂົ້າໃນວຽກງານການສະກັດກັ້ນ ແລະ ຕ້ານການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ ເຊິ່ງມອບໂດຍ ທ່ານ ພຸດທະໄຊ ສີວິໄລ, ຮອງຜູ້ວ່າການ ທຫລ, ຫົວໜ້າຄະນະຮັບຜິດຊອບປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກ ສາຍພັນໃໝ່ (COVID-2019) ຢູ່ ທຫລ ແລະ ໃຫ້ກຽດຮັບໂດຍ ທ່ານ ດຣ. ບຸນແຝງ ພູມມະໄລສິດ ລັດຖະມົນຕີກະຊວງສາທາລະນະສຸກ, ຮອງຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ລວມຈຳນວນເງິນທີ່ມອບທັງໝົດ 500.000.000 ກີບ



ໃນປັດຈຸບັນສະພາບການແຜ່ລະບາດຂອງເຊື້ອພະຍາດ COVID-19 ທີ່ໄດ້ແຜ່ລາມໄປຢ່າງກວ້າງຂວາງໃນທົ່ວໂລກ ແລະ ຍັງບໍ່ມີທ່າອ່ຽງທີ່ຈະຫຼຸດລົງ ອັນໄດ້ເຮັດໃຫ້ເກີດມີຜູ້ຕິດເຊື້ອ 150,196,058 ຄົນ, ເສຍຊີວິດ 3,162,939 ຄົນ. ສຳລັບຢູ່ ສປປ ລາວ ມີຜູ້ຕິດເຊື້ອພະຍາດ COVID-19 ສະສົມ 672 ຄົນ ແລະ ຍັງສືບຕໍ່ຕິດຕາມປິ່ນປົວຢູ່ໂຮງໝໍ 622 ຄົນ (ຂໍ້ມູນຮອດວັນທີ 29 ເມສາ 2021 ເວລາ 12:00 ໂມງ); ຕໍ່ກັບບັນຫາດັ່ງກ່າວ, ຂະແໜງການທະນາຄານກໍ່ໄດ້ເອົາໃຈໃສ່ຍົກສູງການຈັດຕັ້ງປະຕິບັດຕາມມາດຕະການຂອງຄະນະສະເພາະກິດ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 15/ນຍ ວາງອອກຢ່າງເຄັ່ງຄັດ.

ໃນໂອກາດດຽວກັນນີ້, ທ່ານ ດຣ. ບຸນແຝງ ພູມມະໄລສິດ, ລັດຖະມົນຕີກະຊວງສາທາລະນະສຸກ, ຮອງຫົວໜ້າຄະນະສະເພາະກິດ ໄດ້ສະແດງຄວາມຂອບໃຈ ແລະ ຍ້ອງຍໍຊົມເຊີຍມາຍັງ ທຫລ ກໍ່ຄືຂະແໜງທະນາຄານທີ່ໄດ້ມີນໍ້າໃຈປະກອບສ່ວນໃນການຄວບຄຸມການແຜ່ລະບາດຂອງເຊື້ອພະຍາດ COVID-19 ຊຶ່ງຈະເປັນການຊ່ວຍບັນເທົາຄວາມຫຍຸ້ງຍາກຂອງວຽກງານດັ່ງກ່າວໃນໄລຍະນີ້.

**# ຂ່າວ: ວັນປະເສີດ ສົມບູນຂັນ**

**# ພາບ: ສົມມີໄຊ ທຳມະວົງ**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**